**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມໃຫຍ່ພະລາທິການ

ກົມຄຸ້ມຄອງຊັບສິນ-ທີ່ດິນ

ເລກທີ 601 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 18 ກັນຍາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ໄດ້ຮັບອະນຸມັດງົບປະມານຈາກລັດຖະບານປະຈຳປີ 2026: ເພື່ອດຳເນີນການປະມູນວຽກຕິດຕັ້ງໝໍ້ແປງໄຟຟ້າ ແລະ ໝໍ້ວັດແທກບໍລິມາດນ້ຳປະປາ ເຂົ້າຕຶກກອງພັນ 120, 121, 122 ກອງບັນຊາການປ້ອງກັນສູນກາງ ກະຊວງປ້ອງກັນຄວາມສະຫງົບ.

2. ຂໍເຊີນບັນດາຫ້າງຮ້ານ, ບໍລິສັດ, ເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງສຳລັບການປະມູນວຽກຕິດຕັ້ງໝໍ້ແປງໄຟຟ້າ ແລະ ໝໍ້ວັດແທກບໍລິມາດນ້ຳປະປາ ເຂົ້າຕຶກກອງພັນ 120, 121, 122 ກອງບັນຊາການປ້ອງກັນສູນກາງ, ກະຊວງປ້ອງກັນຄວາມສະຫງົບ,ກຳນົດໄລຍະສ້ອມແປງ ແມ່ນ 30 ວັນ.

3. ການປະມູນດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ,ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ ກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ທີ່ຕັ້ງຢູ່: ບ້ານພະໂພ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: 021 970455; 020 28037511, ເລີ່ມຂາຍຊອງແຕ່ວັນທີ 18 ກັນຍາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

5. ຊອງປະມູນຕ້ອງສົ່ງກ່ອນ 08:30 ໂມງ, ຂອງວັນທີ 22 ຕຸລາ 2026 ທີ່ກົມຄຸ້ມຄອງຊັບສິນ-ທີ່ດິນ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ແລະ ຊອງຈະໄດ້ເປີດໃນເວລາ 09:00 ໂມງ,ຂອງວັນທີ 22 ຕຸລາ 2026 ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນທີ່ຫ້ອງປະຊຸມຊັ້ນ IV ອາຄານຫຼັງໃໝ່ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ.

6. ທຸກໆຊອງປະມູນ ຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ແຊັກເງິນສົດ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນມາພ້ອມ.

**ຫົວໜ້າກົມ**

ບຸນເພັງ ນາທະວົງ